**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມບັນຊີ

ເລກທີ /ກບຊ

ນະຄອນຫຼວງວຽງຈັນ, ວັນທີ ມິຖຸນາ 2017

# ໃບອະນຸຍາດ

## ນຳໃຊ້ຊຸດຄຳສັ່ງໂປຣແກຣມບັນຊີ SAP

## ເຂົ້າໃນວຽກງານບັນຊີວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ (ສະບັບປັບປຸງ) ສະບັບເລກທີ 01/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 0210/ກງ, ລົງວັນທີ 01 ກຸມພາ 2010 ກ່ຽວກັບ ການຄຸ້ມຄອງບັນດາຊຸດຄຳສັ່ງຄອມພິວເຕີ ທາງດ້ານການບັນຊີວິສາຫະກິດ (ໂປຣແກຣມບັນຊີ);
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 2586/ກງ, ລົງວັນທີ 03 ສິງຫາ 2015 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມບັນຊີ.

**ກົມບັນຊີ ກະຊວງການເງິນ ອະນຸຍາດໃຫ້ແກ່:**

ມາດຕາ 1 ອະນຸຍາດໃຫ້ ***ບໍລິສັດ*** ( ) ນຳໃຊ້ຊຸດຄຳສັ່ງໂປຣແກຣມບັນຊີ SAP ເພື່ອຮັບໃຊ້ເຂົ້າໃນຈັດການປະຕິບັດວຽກງານການບັນຊີ ພາຍໃນບໍລິສັດເທົ່ານັ້ນ, ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ນຳໃຊ້ຢູ່ບໍລິສັດອື່ນຢ່າງເດັດຂາດ.

ມາດຕາ 2 ບໍລິສັດ ຕ້ອງໄດ້ມາຕໍ່ໃບອະນຸຍາດນຳໃຊ້ໂປຣແກຣມບັນຊີປະຈຳປີບໍ່ໃຫ້ກາຍ 03 ເດືອນ ນັບຈາກມື້ປິດບັນຊີປະຈຳປີ.

ມາດຕາ 3 ຖ້າຫາກມີການດັດແກ້ ຫຼື ປັບປຸງໂປຣແກຣມບັນຊີ SAP ຊຸດຄຳສັ່ງທາງດ້ານການບັນຊີວິສາຫະກິດດັ່ງກ່າວ ບໍລິສັດ ຕ້ອງໄດ້ນຳສະເໜີກົມບັນຊີ ກະຊວງການເງິນ ເພື່ອກວດກາຄວາມຖືກຕ້ອງຄືນໃໝ່ ຕາມກົດໝາຍ ວ່າດ້ວຍ ການບັນຊີ (ສະບັບປັບປຸງ).

ມາດຕາ 4 ໃບອະນຸຍາດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ຈັນທະລີ ເສນາພັນ